ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງໂຍທາທິການ ແລະ ຂົນສົ່ງ

ກົມຂົວທາງ

ຄະນະກຳມະການປະມູນຈັດຊື້

ໂຄງການ ຂະແໜງຂົວທາງລາວ ໄລຍະ 2

ເງິນກູ້ຢືມຈາກທະນາຄານໂລກ (ເລກທີ 5920-LA)

ສັນຍາເລກທີ: **G-16**

ເລກທີ 12435 /ຍທຂ.ກຂທ

ນະຄອນຫຼວງວຽງຈັນ, ວັນທີ 4.6.2019

## ໜັງສືແຈ້ງເຊີນປະມູນ

1. ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ຮັບທຶນຈາກທະນາຄານໂລກ ເພື່ອໃຊ້ຈ່າຍສຳລັບໂຄງການ ຂະແໜງຂົວທາງລາວ ໄລຍະ 2 (Lao Road Sector Project 2) ແລະ ມີຈຸດປະສົງນຳໃຊ້ສ່ວນໜຶ່ງຂອງທຶນເຂົ້າໃນລາຍຈ່າຍຂອງສັນຍາ **ການຈັດຊື້ລົດໃຫຍ່** ເພື່ອຮັບໃຊ້ການເຄື່ອນໄຫວວຽກງານຂອງໂຄງການ.

2. ກົມຂົວທາງ, ກະຊວງໂຍທາທິການ ແລະ ຂົນສົ່ງ ຂໍເຊີນບັນດາບໍລິສັດທີ່ມີຄວາມສົນໃຈ ແລະ ມີຄວາມເໝາະສົມ ເຂົ້າຍື່ນຊອງປະມູນຈັດຊື້ ລົດກະບະຂັບເຄື່ອນ 4 ລໍ້ (Pick-up 4WD) ຈຳນວນ 4 ຄັນ ເພື່ອຮັບໃຊ້ການເຄື່ອນໄຫວວຽກງານຂອງໂຄງການ.

   ສະຖານທີ່ສົ່ງມອບ: ກະຊວງໂຍທາທິການ ແລະ ຂົນສົ່ງ, ກົມຂົວທາງ, ນະຄອນຫຼວງວຽງຈັນ

   ຄາດຄະເນມື້ສົ່ງມອບ: 45 ວັນ ຫຼັງເຊັນສັນຍາ.

3. ການປະມູນ ຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງ ຕາມທີ່ໄດ້ລະບຸໄວ້ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳຂອງກະຊວງການເງິນ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ ລົງວັນທີ 13 ກຸມພາ 2019.

4. ບໍລິສັດທີ່ມີຄວາມເໝາະສົມ ອາດໄດ້ຮັບຂໍ້ມູນຈາກ ຜູ້ຈັດຊື້ ຕາມທີ່ຢູ່ຂ້າງລຸ່ມນີ້ ແລະ ສາມາດກວດກາເອກະສານປະມູນໃນວັນເວລາລັດຖະການ ແຕ່ **08:00** ຫາ **16:00** ໂມງ ຕາມທີ່ຢູ່ຂ້າງລຸ່ມນີ້.

5. ບໍລິສັດທີ່ມີຄວາມເໝາະສົມ ອາດຊື້ເອກະສານປະມູນຄົບຊຸດເປັນ ພາສາລາວ ໂດຍຍື່ນໜັງສືຫາທີ່ຢູ່ຂ້າງລຸ່ມນີ້ ແລະ ຈ່າຍເງິນທີ່ຈະບໍ່ສົ່ງຄືນຈຳນວນໜຶ່ງຮ້ອຍ (100) ໂດລາສະຫະລັດ ຫຼືແປດແສນທີກສິບພັນ

(860.000) ກີບ. ວິທີຊໍາລະຕ້ອງຈ່າຍເປັນ ເງິນສົດ ຢູ່ກົມການເງິນ (ພະແນກຈັດຕັ້ງ-ບໍລິຫານ, ໜ່ວຍງານປະຕູດຽວ) ແລະ ຮັບເອກະສານປະມູນ ຢູ່ໂຄງການຂະແໜງຂົວທາງລາວ ໄລຍະ 2, ກົມຂົວທາງ (ພະແນກຄຸ້ມຄອງທາງຫຼວງ) ຕາມທີ່ຢູ່ລຸ່ມນີ້.

6. ຊອງປະມູນຈະຕ້ອງສົ່ງຫາບ່ອນຢູ່ຂ້າງລຸ່ມນີ້ ໃນວັນທີ ຫລື ກ່ອນວັນທີ 12 **ກໍລະກົດ** (7) 2019, ເວລາ 14:00 ໂມງ, ການສົ່ງດ້ວຍລະບົບເອເລັກໂຕຼນິກຈະບໍ່ອະນຸຍາດ. ການປະມູນທີ່ສົ່ງຊ້າຈະຖືກປະຕິເສດ. ການເປີດຊອງປະມູນ ຈະເປີດຕໍ່ໜ້າສາທາລະນະໂດຍຊ່ອງໜ້າຜູ່ຕາງໜ້າ ຜູ່ເຂົ້າແຂ່ງຂັນປະມູນທີ່ຖືກແຕ່ງຕັ້ງ ແລະ ບຸກຄົນອື່ນທີ່ສົນໃຈຢາກເຂົ້າຮ່ວມ ຢູ່ສະຖານທີ່ໆກໍານົດໄວ້ຂ້າງລຸ່ມນີ້ ໃນເວລາ 14:00 ໂມງ ຂອງວັນທີ 12 ກໍລະກົດ (7) 2019.

7. ທຸກໆເອກະສານຈະຕ້ອງປະກອບແຈ້ງການຄໍ້າປະກັນການປະມູນ.

8. ທີ່ຢູ່ທີ່ເວົ້າເຖິງຢູ່ຂ້າງລຸ່ມນີ້ແມ່ນ:

| | |
|---|---|
| ເຖິງ: | ທ່ານ ລໍາພູນ ຄູນພັກດີ |
| ທີ່ຢູ່: | ກົມຂົວທາງ (ພະແນກຄຸ້ມຄອງທາງຫຼວງ); ກະຊວງໂຍທາທິການ ແລະ ຂົນສົ່ງ ຖະໜົນ ລ້ານຊ້າງ, ບ້ານໂພນໄຊ, ນະຄອນຫຼວງວຽງຈັນ |
| ຊັ້ນ/ນໍ້າເບີຫ້ອງ: | ຊັ້ນ 3 (ຕຶກ 4 ຊັ້ນ) |
| ເມືອງ: | ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປລາວ, ZIP ກົດ: 01000; |
| ໂທລະສັບ: | +856 21 415 378; 020 52414956; 020 22411211 |
| ອີເມວ: | lamphounk@yahoo.com ແລະ inthapada@hotmail.com |

ຮອງຫົວໜ້າກົມຂົວທາງ
ຫົວໜ້າຄະນະກໍາມະການປະມູນຈັດຊື້

ລິດຕາ ຂັດທິຍະ